# ກອງປະຊຸມໂຕະມົນປະຈຳປີ 2017

***"ເພີ່ມທະວີການເປັນຄູ່ຮ່ວມ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ເພື່ອບັນລຸເປົ້າໝາຍການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ເປົ້າໝາຍການພັດທະນາແບບຍືນຍົງ"***

**ຄັ້ງວັນທີ 22-23 ພະຈິກ 2017**

**ທີ່ ຫ້ອງປະຊຸມ ສະໂມສອນ ຫຼັກ 4 ຢູ່ເມືອງປາກເຊ, ແຂວງຈຳປາສັກ**

## <u>ວາລະກອງປະຊຸມ</u>

### <u>ມື້ທີ 1 : ວັນທີ 22 ພະຈິກ 2017 – ຈັດກຸ່ມສົນທະນາລະດັບວິຊາການ ແລະ ຢ້ຽມຢາມໂຄງການພາກສະໜາມ</u>

### <u>ພາກເຊົ້າ</u> – ຈັດກຸ່ມສົນທະນາ

| | |
|---|---|
| **08:00 – 08:40** | **ລົງທະບຽນ** |
| **08:40 – 08:50** | **ກ່າວຕ້ອນຮັບບັນດາຄະນະຜູ້ແທນເຂົ້າສູ່ກອງປະຊຸມ**<br>*ໂດຍ: ທ່ານ ບົວສອນ ວົງສອງຄອນ, ຮອງເຈົ້າແຂວງ ແຂວງຈຳປາສັກ* |
| **08:50 – 09:00** | **ກ່າວເປີດກອງປະຊຸມ**<br>*ໂດຍ: ທ່ານ ປອ. ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ* |
| **09:00 – 09:30** | **ນຳສະເໜີ ກ່ຽວກັບ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງຈຳປາສັກ: ຄວາມຄືບໜ້າ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ:**<br>• ສະພາບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຈຳປາສັກໂດຍລວມ<br>• ເປົ້າໝາຍໃຫຍ່ 1: ການພັດທະນາເສດຖະກິດ - ຜົນສຳເລັດ ແລະສິ່ງທ້າທາຍ [ລວມທັງປະເດັນບັນຫາທີ່ຕິດພັນກັບ ດັດສະນີຄວາມບອບບາງທາງດ້ານເສດຖະກິດ (EVI) ພ້ອມກັບຄວາມພະຍາຍາມ/ຄວາມສຳເລັດ ໃນການດຶງດູດການລົງທຶນທີ່ມີຄຸນນະພາບຈາກພາກເອກະຊົນ];<br>• ເປົ້າໝາຍໃຫຍ່ 2: ການພັດທະນາຂະແໜງສັງຄົມ - ຜົນສຳເລັດ ແລະສິ່ງທ້າທາຍ [ລວມທັງປະເດັນບັນຫາທີ່ຕິດພັນກັບ ດັດສະນີຊັບສິນມະນຸດ (HAI) ແລະປະເດັນບັນຫາ ກ່ຽວກັບການພັດທະນາສີມືແຮງງານ ໃນຂະແໜງການພັດທະນາຕ່າງໆທີ່ເປັນບູລິມະສິດ ຂອງແຂວງຈຳປາສັກ];<br>• ເປົ້າໝາຍໃຫຍ່ 3: ການພັດທະນາດ້ານສິ່ງແວດລ້ອມ - ຜົນສຳເລັດ ແລະສິ່ງທ້າທາຍ [ລວມທັງປະເດັນບັນຫາທີ່ຕິດພັນກັບ ວຽກງານສິ່ງແວດລ້ອມ ຂອງດັດສະນີຄວາມບອບບາງທາງດ້ານ |

| | |
|---|---|
| | ເສດຖະກິດ];<br>• ຍົກໃຫ້ເຫັນຕົວຢ່າງທີ່ດີ ກ່ຽວກັບ ການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືສາມຫຼ່ຽມ ຢູ່ໃນແຂວງຈຳປາສັກ.<br><br>*ໂດຍ: ທ່ານ ສາຍທອງ ໄຊຍະວົງ, ຫົວໜ້າພະແນກແຜນການ ແລະການລົງທຶນແຂວງຈຳປາສັກ* |
| **09:30 – 10:00** | **ສົນທະນາ** |
| **10:00 – 10:15** | **ພັກຜ່ອນດື່ມຊາ-ກາເຟ** |
| **10:30 – 12:30** | **ຈັດເປັນ 4 ກຸ່ມສົນທະນາ ຕາມຫົວຂໍ້ລຸ່ມນີ້:** |
| | **1. ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ**<br>• ແລກປ່ຽນຂໍ້ມູນ ກ່ຽວກັບ ສະພາບການພັດທະນາດ້ານເສດຖະກິດ, ຊັບພະຍາກອນມະນຸດ ແລະສິ່ງແວດລ້ອມ ລວມທັງບັນດາບູລິມະສິດ ແລະກິດຈະກຳທີ່ຕ້ອງປະຕິບັດເພື່ອບັນລຸການຫຼຸດພົ້ນອອກຈາກ LDC;<br>• ກະກຽມປະເມີນ LDC ໃນປີ 2018 ແລະການສະຫຼຸບຜົນໄດ້ຮັບໃນໄລຍະຍາວຂອງການຫຼຸດພົ້ນອອກຈາກ LDC ສຳລັບ ສປປ ລາວ;<br>• ຄວາມຄືບໜ້າມາຮອດປະຈຸບັນຂອງການເຊື່ອມສານເປົ້າໝາຍ SDG, ແຜນການຈັດຕັ້ງປະຕິບັດ, ຕົວຊີ້ວັດ, ການຕິດຕາມ, ລາຍງານ ແລະການນຳໃຊ້ຂໍ້ມູນສະຖິຕິ;<br>• ກະກຽມໃສ່ກອງປະຊຸມລະດັບສູງທີ່ຈະໄດ້ຈັດຂຶ້ນໃນເດືອນ ກໍລະກົດ 2018 ລວມທັງການກະກຽມບົດລາຍງານ SDG ແບບສະໝັກໃຈແຫ່ງຊາດຄັ້ງທຳອິດ.<br>• ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄຳຄິດຄຳເຫັນ ແລະຂໍ້ສະເໜີແນະນຳ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2<br><br>➢ ***ຄະນະສົນທະນາ:***<br>1.1. **ທ່ານ ນາງ ເພັດສະໝອນ ສອນ**, ຮອງຫົວໜ້າສູນສະຖິຕິແຫ່ງຊາດ, ກະຊວງ ຜທ (ຫົວຂໍ້: ວຽກງານສະຖິຕິ ເພື່ອຕິດຕາມ ແລະລາຍງານ ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ)<br>1.2. **ທ່ານ ປອ. ສິດທິຣິດ ຣາຊະພົນ**, ຫົວໜ້າພະແນກ, ສູນຄົ້ນຄວ້ານະໂຍບາຍການພັດທະນາ, ກະຊວງ ຜທ (ຫົວຂໍ້: ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບົດລາຍງານການພັດທະນາມະນຸດ)<br>1.3. **ທ່ານ ທິມ ເອັນເດີລິນ**, ຫົວໜ້າຫ້ອງການຮ່ວມມືປະຈຳພາກພື້ນແມ່ນ້ຳຂອງ (ກຳປູເຈຍ, ລາວ ແລະ ຫວຽດນາມ) ຂອງອົງການຮ່ວມມືເພື່ອການພັດທະນາຂອງສະວີດເຊີແລນ (ຫົວຂໍ້: ການສະໜັບສະໜູນ ໃນການເຊື່ອມສານ ແລະຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ)<br>1.4. **ທ່ານ ມູສຊີ ດີລິເລນ**, ຫົວໜ້າໜ່ວຍງານ ປະເທດກຳລັງພັດທະນາທີ່ບໍ່ມີຊາຍແດນຕິດຈອດກັບທະເລ, ພະແນກຮັບຜິດຊອບທະວີບອາຟຣິກາ, ບັນດາປະເທດດ້ອຍພັດທະນາ ແລະ ແຜນງານພິເສດ (UNCTAD) (ຫົວຂໍ້: ມຸມມອງຂອງອົງການສະຫະປະຊາຊາດກ່ຽວກັບການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ)<br>1.5. **ທ່ານ ອຳພອນ ສຸວັນນະລາດ**, ຫົວໜ້າສະມາຄົມ ເພື່ອການສະໜັບສະໜູນ ແລະ |

| | |
|---|---|
| | ປັບປຸງຊີນນະບົດ (ຫົວຂໍ້: ການປະກອບສ່ວນໃນການເຊື່ອມສານ ແລະຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ)<br>1.6. **ທ່ານ ສີນຸກ ສີສົມບັດ**, ເຈົ້າຂອງທຸລະກິດກາເຟລາວສີນຸກ (ຫົວຂໍ້: ການປະກອບສ່ວນ ໃນການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ)<br><br>➢ ***ຜູ້ນໍາພາການສົນທະນາ:*** *ທ່ານ ອານຸພາບ ວົງໜໍ່ແກ້ວ, ຫົວໜ້າກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ*<br>➢ ***ສະໜັບສະໜູນດ້ານວິຊາການໂດຍ:*** *ອົງການ ສປຊ ເພື່ອການພັດທະນາ ແລະ ຫ້ອງການ ຜູ້ປະສານງານຂອງ ອົງການສະຫະປະຊາຊາດ* |
| | **2. ການລົງທຶນທີ່ມີຄຸນນະພາບຂອງເອກະຊົນ ສໍາລັບ ການພັດທະນາ**<br>• ໂດຍອີງໃສ່ການປຶກສາຫາລື ແລະບູລິມະສິດທີ່ໄດ້ກໍານົດໃນກອງປະຊຸມທຸລະກິດລາວ ເຊິ່ງໄດ້ ຈັດຂຶ້ນໃນເດືອນ ມີນາ 2017 ທີ່ຜ່ານມາ, ກໍານົດຂົງເຂດບູລິມະສິດທີ່ ບັນດາຄູ່ຮ່ວມສາມາດ ປະກອບສ່ວນໃນການເລັ່ງລັດຈັດຕັ້ງປະຕິບັດໃຫ້ມີຄວາມຄືບໜ້າໃນຂົງເຂດຫຼັກເຊັ່ນ: (1) ການປັບປຸງກົດໝາຍຕ່າງໆ ເປັນຕົ້ນ ກົດໝາຍສົ່ງເສີມການລົງທຶນ ແລະການຈັດຕັ້ງປະຕິບັດ "ການບໍລິການປະຕູດຽວ" (2) ການເກັບອາກອນ; (3) ຂັ້ນຕອນການຂົນສົ່ງ ແລະການນໍາເຂົ້າ/ສົ່ງອອກ; (4) ການອອກໃບທະບຽນ/ໃບອະນຸຍາດທຸລະກິດ; (5) ການເຂົ້າເຖິງແຫຼ່ງການເງິນ; ແລະ (6) ການພັດທະນາຕະຫຼາດແຮງງານ;<br>• ກໍານົດຕົວຢ່າງກ່ຽວກັບການປະກອບສ່ວນຂອງການລົງທຶນພາກເອກະຊົນທີ່ມີ 'ຄຸນນະພາບ' ເຂົ້າໃນວຽກງານການຫຼຸດພົ້ນອອກຈາກ LDC ແລະ/ຫຼື ການບັນລຸເປົ້າໝາຍ SDG ຢູ່ໃນຂະແໜງ ການຕົ້ນຕໍ ເປັນຕົ້ນແມ່ນ ກະສິກໍາ, ອຸດສາຫະກໍາ/ອຸດສາຫະກໍາປຸງແຕ່ງ, ການຄ້າ/ການບໍລິການເຊັ່ນ:ຂະແໜງການທ່ອງທ່ຽວ, ຂະແໜງການບໍລິການດ້ານການເງິນ ແລະອື່ນໆ.<br>• ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄໍາຄິດຄໍາເຫັນ ແລະຂໍ້ສະເໜີແນະນໍາ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2<br><br>➢ ***ຄະນະສົນທະນາ:***<br>2.1. **ທ່ານ ນາງ ວາລີ ເວດສະພົງ**, ຮອງປະທານ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ຫົວຂໍ້: ການເຊື່ອມໂຍງກັບ ເວທີນັກທຸລະກິດລາວ)<br>2.2. **ທ່ານ ພູວຽງ ພົງສາ**, ຮອງຫົວໜ້າກົມແຜນການ ແລະການຮ່ວມມື, ກະຊວງອຸດສາຫະກໍາ-ການຄ້າ (ຫົວຂໍ້: ວຽກງານທີ່ຕິດພັນກັບໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ ເຊັ່ນ ການພັດທະນາ ແລະການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ພາກທຸລະກິດ)<br>2.3. **ທ່ານ ລີໂອ ຟາເບີ**, ທູດສະຫະພາບເອີຣົບ ປະຈໍາລາວ (ຫົວຂໍ້: ວຽກງານທີ່ຕິດພັນກັບໜ່ວຍງານຂະແໜງການ ໃນນາມທີ່ເປັນປະທານຮ່ວມ)<br>2.4. **ທ່ານ ມອມເບີດ ໂຣບເປ**, ນັກເສດຖະສາດການຄ້າອາວຸໂສ, ທະນາຄານໂລກ (ຫົວຂໍ້: ຄວາມສະດວກສະບາຍໃນການດໍາເນີນທຸລະກິດ ແລະ ການເຕີບໂຕສີຂຽວ)<br>2.5. **ທ່ານ ທາເຄຊິ ຮູກິຮາຣະ**, ທູດຍີ່ປຸ່ນ ປະຈໍາລາວ (ການລົງທຶນຂອງຕ່າງປະເທດໂດຍກົງ ທີ່ມີຄຸນນະພາບ)<br>2.6. **ທ່ານ ແຈັກ ຊີຣານ**, ຮອງປະທານ ສະພາການຄ້າເອີຣົບ (ຫົວຂໍ້: ການເກັບອາກອນ ແລະ ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ) |

- ***ຜູ້ນຳພາການສົນທະນາ:*** *ທ່ານ ອຸຕະແກ້ວ ແກ້ວດວງສີ, ຮອງຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ*
- ***ສະໜັບສະໜູນດ້ານວິຊາການໂດຍ:*** *ສະຫະພາບເອີຣົບ*

**3. ການລົງທຶນໃສ່ ການພັດທະນາສີມືແຮງງານ ເຊິ່ງເປັນປັດໃຈສຳຄັນ ໃນການພັດທະນາມະນຸດ**

- ສະໜັບສະໜູນໜ່ວຍງານຂະແໜງການສຶກສາ ໃຫ້ຄົ້ນຄວ້າຊອກຫາວິທີທາງໃນການເລັ່ງລັດຈັດຕັ້ງປະຕິບັດການພັດທະນາສີມື/ທັກສະໃຫ້ແກ່ກຳລັງແຮງງານ ກໍ່ຄືການຈັດຕັ້ງປະຕິບັດຍຸດທະສາດການພັດທະນາມະນຸດ ເພື່ອແກ້ໄຂບັນຫາການຂາດແຄນແຮງງານທີ່ມີສີມື ເຊິ່ງຈະຊ່ວຍປະກອບສ່ວນເຂົ້າໃນການພັດທະນາພາກທຸລະກິດ/ເອກະຊົນ ກໍ່ຄືການພັດທະນາປະເທດຊາດ;
- ປຶກສາຫາລືກ່ຽວກັບປະໂຫຍດຈາກການມີແຮງງານໜຸ່ມຫຼາຍ ແຕ່ໃນປະຈຸບັນແຮງງານທີ່ມີສີມືໃນລາວຍັງມີຈຳນວນໜ້ອຍ ແລະອາຊີບທີ່ສ້າງມູນຄ່າເພີ່ມສ່ວນໃຫຍ່ແມ່ນຍັງເປັນແຮງງານຕ່າງປະເທດທີ່ມາຈາກບັນດາປະເທດເພື່ອນບ້ານ. ຈາກນັ້ນ, ປຶກສາຫາລືກ່ຽວກັບຄວາມຄືບໜ້າ, ສິ່ງທ້າທາຍ/ສິ່ງກີດຂວາງ ແລະແຜນໃນຕໍ່ໜ້າເພື່ອເຮັດໃຫ້ຕະຫຼາດແຮງງານຂອງລາວມີຄວາມຫຼາກຫຼາຍ ແລະມີຄວາມສາມາດໃນການແຂ່ງຂັນຫຼາຍຂຶ້ນ;
- ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄຳຄິດຄຳເຫັນ ແລະຂໍ້ສະເໜີແນະນຳ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2.

- ***ຄະນະສົນທະນາ:***
  - 3.1. **ທ່ານ ພຸດທະວົງ ພູມມະສັກ,** ຫົວໜ້າພະແນກຂໍ້ມູນຂ່າວສານຕະຫຼາດແຮງງານ, ກົມພັດທະນາສີມືແຮງງານ ແລະຈັດຫາງານ, ກະຊວງແຮງງານ ແລະສະຫວັດດີການສັງຄົມ (ຫົວຂໍ້: ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ)
  - 3.2. **ທ່ານ ທີ ຊີ ເສັງ,** ຜູ້ຈັດການທົ່ວໄປຂອງ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ (ຫົວຂໍ້: ປະເດັນທີ່ຕິດພັນກັບການສ້າງວຽກເຮັດງານທຳໃຫ້ແກ່ທ້ອງຖິ່ນ)
  - 3.3. **ທ່ານ ນາງ ໂຊຟີ ວິວຄົນຊັ້ນ,** ເລຂາສອງ - ການເມືອງ ແລະ ພັດທະນາຊັບພະຍາກອນມະນຸດ, ສະຖານທູດອົດສະຕາລີ ປະຈຳລາວ (ຫົວຂໍ້: ການສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາແຫ່ງຊາດ ແລະຍຸດທະສາດການພັດທະນາ ຊັບພະຍາກອນມະນຸດ)
  - 3.4. **ທ່ານ ກຣິມ ຈອນ ບັກລີ້,** ຫົວໜ້າ ຄະນະສະໜັບສະໜູນດ້ານວິຊາການ ກ່ຽວກັບອາຊີບທີ່ໝັ້ນຄົງຂອງ ອົງການແຮງງານສາກົນ ສຳລັບພາກພື້ນອາຊີຕາເວັນອອກ ແລະຕາເວັນອອກສ່ຽງໃຕ້ ແລະ ປາຊີຟິກ, ແລະ ຫົວໜ້າຫ້ອງການ ສຳລັບປະເທດໄທ, ກຳປູເຈ່ຍ ແລະ ລາວ (ຫົວຂໍ້: ຂອບແຮງງານສາກົນ)
  - 3.5. **ທ່ານ ໂທມໍ່ ໂດໂນວັນ,** ຫົວໜ້າທີ່ປຶກສາດ້ານວິຊາການ, ໂຄງການພັດທະນາຂອງລຸກຊຳບວກ ລາວ/029 ກ່ຽວກັບທັກສະສຳລັບການທ່ອງທ່ຽວ (ຫົວຂໍ້: ການຝຶກອົບຮົມວິຊາຊີບ ແລະການຈ້າງງານ)

- ***ຜູ້ນຳພາການສົນທະນາ:*** *ທ່ານ ນາງ ດອກແກ້ວ ພົນທະຈິດ, ຮອງຫົວໜ້າກົມ ແຜນການ, ກະຊວງສຶກສາທິການ ແລະ ກິລາ*
- ***ສະໜັບສະໜູນດ້ານວິຊາການໂດຍ:*** *ອົດສະຕາລີ*

| | |
|---|---|
| | **4. ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືສາມຫຼ່ຽມ: "ກົນໄກການຈັດຕັ້ງປະຕິບັດ ແລະການຕິດຕາມ ເພື່ອການພັດທະນາທີ່ມີປະສິດທິຜົນ"**<br>• ປຶກສາຫາລືກ່ຽວກັບຂອບນະໂຍບາຍ ແລະສະຖາບັນສຳລັບການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືສາມຫຼ່ຽມ;<br>• ກຳນົດແນວຄິດລິເລີ່ມໃນການຮ່ວມມືແບບໃຕ້-ໃຕ້ ໃນຂອບອາຊຽນທີ່ແທດເໝາະກັບຫົວຂໍ້ທີ່ເປັນບູລິມະສິດ ຊຶ່ງສ່ອງແສງໃຫ້ເຫັນຜົນໄດ້ຮັບຂອງການພັດທະນາທີ່ມີຄຸນນະພາບສູງ ໂດຍສະເພາະການປະກອບສ່ວນໃນການຫຼຸດພົ້ນອອກຈາກ LDC ແລະການບັນລຸເປົ້າໝາຍ SDG ບໍ່ວ່າຈະເປັນດ້ານເສດຖະກິດ ກໍ່ຄືດ້ານສັງຄົມ ແລະສິ່ງແວດລ້ອມ ເຊິ່ງສາມາດເຫັນໄດ້ ໃນການລົງຢ້ຽມຢາມໂຄງການພາກສະໜາມຢູ່ແຂວງ;<br>• ເຫັນດີເປັນເອກະພາບກັນ ກ່ຽວກັບ ບັນດາຄຳຄິດຄຳເຫັນ ແລະຂໍ້ສະເໜີແນະນຳ ທີ່ຈະລາຍງານໃນກອງປະຊຸມໂຕະມົນ ມື້ທີ່ 2.<br><br>➢ ***ຄະນະສົນທະນາ:***<br>4.1. **ທ່ານ ນາງ ສີສະຫວັນ ດີດາຣາວົງ,** ຮອງຫົວໜ້າກົມແຜນການ ກະຊວງແຜນການ ແລະການລົງທຶນ (ຫົວຂໍ້: ປະສົບການກ່ຽວກັບວຽກງານການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືແບບສາມຫຼ່ຽມ: ການເຕີບໂຕສີຂຽວ ແລະ ຂະບວນການວາງແຜນໃນລະດັບພາກພື້ນ)<br>4.2. **ທ່ານ ດຣ. ບຸນເພັງ ພິລາວົງ,** ຫົວໜ້າກົມອະນາໄມ, ກະຊວງສາທາລະນະສຸກ (ຫົວຂໍ້: ປະສົບການກ່ຽວກັບວຽກງານການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືແບບສາມຫຼ່ຽມ: ການຄ້ຳປະກັນ ສະບຽງອາຫານ ແລະໂພຊະນາການ ໂດຍສະເພາະ ການເຮັດວຽກກັບບັນດາປະເທດໃນພາກພື້ນ)<br>4.3. **ທ່ານ ລິມ ຢັຮອງ,** ເລຂາສອງ (ການເມືອງ), ສະຖານທູດສາທາລະນະລັດສິງກະໂປປະຈຳລາວ (ຫົວຂໍ້: ແນວຄິດລິເລີ່ມໃນປະຈຸບັນ ກ່ຽວກັບວຽກງານການຮ່ວມມືແບບສາມຫຼ່ຽມ)<br>4.4. **ຕາງໜ້າຈາກສາທາລະນະລັດເກົາຫຼີ (ຍືນຢັນແລ້ວ ແຕ່ຍັງບໍ່ໄດ້ຮັບລາຍຊື່),** (ຫົວຂໍ້: ການສະໜັບສະໜູນ ໃຫ້ແກ່ວຽກງານການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືແບບສາມຫຼ່ຽມ)<br>4.5. **ທ່ານ ບາລາສຸບຣາມານຽມ ໂມຣາລີ,** ຮອງຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ ປະຈຳລາວ (ຫົວຂໍ້: ການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືແບບສາມຫຼ່ຽມ, ແລະ ວຽກງານຂະບວນການໂຕະມົນ ກໍ່ຄືກົນໄກໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ)<br><br>➢ ***ຜູ້ນຳພາການສົນທະນາ:*** *ທ່ານ ປອ. ອາລຸນຍາເດດ ຣາຊະພົນ, ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະການລົງທຶນ*<br>➢ ***ສະໜັບສະໜູນດ້ານວິຊາການໂດຍ:*** *ອົງການ ສປຊ ເພື່ອການພັດທະນາ* |
| **12:30 – 13:30** | **ຮັບປະທານອາຫານທ່ຽງ** |

## **พาภบ่าย** – **ຢ້ຽມຢາມໂຄງການພາກສະໜາມ**

| | |
|---|---|
| **13:30 – 17:00** | **ຢ້ຽມຢາມ 3 ໂຄງການທີ່ຕິດພັນກັບເນື້ອໃນຂອງກອງປະຊຸມໂຕະມົນປະຈຳປີ 2017**<br>1. ໂຄງການເກັບກູ້ລະເບີດ (ບ້ານແກວ້ງຍາວ, ເມືອງປ່າຈຽງຈະເລີນສຸກ, ຫຼັກ 40): ເບິ່ງກິດຈະກຳການສຶກສາກ່ຽວກັບ ຄວາມສ່ຽງທີ່ອາດເກີດຈາກລະເບີດບໍ່ທັນແຕກ ທີ່ປະກອບສ່ວນໂດຍກົງໃນການ ບັນລຸ SDG18.<br>2. ໂຄງການປູກກາເຟ ຂອງສະຫະກອນການຜະລິດກາເຟ (ຫຼັກ 24): ໂດຍສະເພາະສຸມໃສ່ກິດກະກຳທີ່ຕິດພັນກັບການປູກແລະເກັບກູ້ກາເຟ, ຂັ້ນຕອນການຜະລິດກາເຟ, ການບັນຈຸໃສ່ຫີບຫໍ່ ການສ້າງວຽກເຮັດງານທຳໃຫ້ແກ່ຊຸມຊົນ.<br>3. ສູນພັດທະນາສີມືແຮງງານ ພາກໃຕ້ ແຂວງຈຳປາສັກ: ເບິ່ງການຝຶກອົບຮົມຂອງສູນ ໄດ້ມີສ່ວນຊ່ວຍໃນການສ້າງວຽກເຮັດງານທຳ ແລະ ອາຊີບທີ່ໝັ້ນຄົງ. |
| **18:00 – 18:30** | **ຢ້ຽມຂໍ່ານັບ ທ່ານເຈົ້າແຂວງ ແຂວງຈຳປາສັກ**<br>*ໂດຍ ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມ*<br>*ທີ່ ໂຮງແຮມ ເອຣາວັນ ຣິເວີໄຊດ໌* |
| **18:30 – 21:00** | **ບາສີສູ່ຂວັນ ແລະງານລ້ຽງອາຫານຄ່ຳ**<br>*ໂດຍການເປັນເຈົ້າພາບຂອງ ທ່ານເຈົ້າແຂວງໆຈຳປາສັກ*<br>*ທີ່ ໂຮງແຮມ ເອຣາວັນ ຣິເວີໄຊດ໌* |

## **ມື້ທີ 2 : ວັນທີ 23 ພະຈິກ 2017 – ກອງປະຊຸມປຶກສາຫາລືລະດັບນະໂຍບາຍ**

## **ພາກເຊົ້າ**

| | |
|---|---|
| **08:30 – 09:00** | **ລົງທະບຽນ** |
| **09:00 – 09:10** | **ກ່າວເປີດກອງປະຊຸມຢ່າງເປັນທາງການ**<br>*ໂດຍ: ພະນະ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ* |
| **09:10 – 09:20** | **ກ່າວມີຄຳເຫັນຕໍ່ກອງປະຊຸມ**<br>*ໂດຍ: ທ່ານ ຮ່າວລຽງ ຊູ, ຜູ້ຊ່ວຍເລຂາທິການໃຫຍ່ຂອງອົງການສະຫະປະຊາຊາດ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນເອກອະທິບໍດີຮັບຜິດຊອບພາກພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ* |

| | |
|---|---|
| **09:20 – 09:25** | **ກ່າວຕ້ອນຮັບບັນດາຄະນະຜູ້ແທນເຂົ້າສູ່ກອງປະຊຸມ**<br>*ໂດຍ: ທ່ານ ປອ. ບຸນຖອງ ດິວິໄຊ, ເຈົ້າແຂວງໆຈຳປາສັກ* |
| **09:25 – 09:30** | **ກ່າວມີຄຳເຫັນຕໍ່ກອງປະຊຸມ**<br>*ໂດຍ: ທ່ານ ປອ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ* |
| **09:30 – 09:35** | **ກ່າວມີຄຳເຫັນຕໍ່ກອງປະຊຸມ**<br>*ໂດຍ: ທ່ານ ນາງ ຄາຣີນາ ອິມໂມເບັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າ ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ* |
| **09:35 – 09:45** | **ຖ່າຍຮູບຮ່ວມກັນ ກັບ ພະນະ ທ່ານ ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ຄະນະປະທານກອງປະຊຸມ**<br>*1. ບັນດາລັດຖະມົນຕີ/ຮອງລັດຖະມົນຕີ ແລະເຈົ້າແຂວງ/ຮອງເຈົ້າແຂວງ*<br>*2. ຫົວໜ້າຄະນະຜູ້ແທນ ຂອງບັນດາຄູ່ຮ່ວມພັດທະນາ/ເອກອັກຄະລັດຖະທູດ ແລະຫົວໜ້າ/ຮອງຫົວໜ້າບັນດາອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ, ສະມາຄົມບໍ່ຫວັງຜົນກຳໄລ ແລະ ພາກເອກະຊົນ.* |
| **09:45 – 10:30** | **- ຢ້ຽມຊົມງານວາງສະແດງຜົນງານການຮ່ວມມືເພື່ອການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອຕ້ອນຮັບກອງປະຊຸມໂຕະມົນປະຈຳປີ 2017**<br>**- ພັກຜ່ອນດື່ມຊາ-ກາເຟ** |

## ຄະນະປະທານກອງປະຊຸມໂຕະມົນປະຈຳປີ 2017:

1. ທ່ານ ປອ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ
2. ທ່ານ ປອ. ບຸນຖອງ ດິວິໄຊ, ເຈົ້າແຂວງແຂວງຈຳປາສັກ
3. ທ່ານ ນາງ ຄາຣີນາ ອິມໂມເບັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າ ອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ

| | |
|---|---|
| **10:30 – 11:00** | **ນຳສະເໜີ ກ່ຽວກັບ ຄວາມຄືບໜ້າ ແລະສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2017 ແລະສະເໜີວຽກຈຸດສຸມ ສຳລັບປີ 2018**<br>• ເປົ້າໝາຍໃຫຍ່ 1 (ດ້ານເສດຖະກິດ) - ລວມທັງອ້າງອີງເຖິງ ຄວາມຄືບໜ້າ ແລະບູລິມະສິດ ໃນການບັນລຸດັດສະນີຄວາມສ່ຽງທາງດ້ານເສດຖະກິດ ເຊິ່ງເປັນເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ<br>• ເປົ້າໝາຍໃຫຍ່ 2 (ດ້ານສັງຄົມ/ການພັດທະນາມະນຸດ) - ລວມທັງອ້າງອີງເຖິງຄວາມຄືບໜ້າ ແລະບູລິມະສິດ ໃນການບັນລຸດັດສະນີຊັບສິນມະນຸດ ເຊິ່ງເປັນເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ<br>• ເປົ້າໝາຍໃຫຍ່ 3 (ດ້ານສິ່ງແວດລ້ອມ) - ລວມທັງອ້າງອີງເຖິງ ຄວາມຄືບໜ້າ ແລະບູລິມະສິດ ໃນການບັນລຸດັດສະນີຄວາມສ່ຽງທາງດ້ານເສດຖະກິດ ເຊິ່ງເປັນເງື່ອນໄຂຂອງການຫຼຸດພົ້ນອອກ |

| | |
|---|---|
| | ຈາກສະຖານະພາບປະເທດດ້ອຍພັດທະນາ<br>• ປະເດັນທີ່ຕິດພັນກັບຫຼາຍຂະແໜງການ<br>• ການຈັດສັນງົບປະມານ/ລາຍຈ່າຍ<br>• ວຽກຈຸດສຸມ ສໍາລັບປີ 2018.<br>*ໂດຍ: ທ່ານ ປອ. ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ* |
| **11:00 – 11:45** | **ສົນທະນາ ກ່ຽວກັບຄວາມຄືບໜ້າ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2017 ແລະ ວຽກຈຸດສຸມ ສໍາລັບປີ 2018** |
| **11:45 – 12:00** | **ກຸ່ມສົນທະນາ 2 - ລາຍງານຜົນຂອງການປຶກສາຫາລື ກ່ຽວກັບ ການລົງທຶນທີ່ມີຄຸນນະພາບຂອງເອກະຊົນ ສໍາລັບ ການພັດທະນາ**<br>*ໂດຍ: ທ່ານ ປອ. ຄໍາລຽນ ພົນເສນາ, ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ (ຕາງໜ້າກຸ່ມທີ່ II)* |
| **12:00 – 12:30** | **ສົນທະນາ ກ່ຽວກັບ ການລົງທຶນທີ່ມີຄຸນນະພາບຂອງເອກະຊົນ ສໍາລັບ ການພັດທະນາ** |
| **12:30 – 13:30** | **ຮັບປະທານອາຫານທ່ຽງ** |

## **ພາກບ່າຍ**

| | |
|---|---|
| **13:30 – 13:45** | **ກຸ່ມສົນທະນາ 1 - ລາຍງານຜົນຂອງການປຶກສາຫາລື ກ່ຽວກັບ ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ**<br>*ໂດຍ: ທ່ານ ແສງເພັດ ຮຸ່ງບຸນຍວງ, ຮອງລັດຖະມົນຕີກະຊວງການຕ່າງປະເທດ (ຕາງໜ້າກຸ່ມທີ່ I)* |
| **13:45 – 14:15** | **ສົນທະນາ ກ່ຽວກັບ ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ** |
| **14:15 – 14:30** | **ກຸ່ມສົນທະນາ 3 - ລາຍງານຜົນຂອງການປຶກສາຫາລື ກ່ຽວກັບ ການລົງທຶນໃສ່ ການພັດທະນາສີມືແຮງງານ ເຊິ່ງເປັນປັດໃຈສໍາຄັນ ໃນການພັດທະນາມະນຸດ**<br>*ໂດຍ: ທ່ານ ຮສ. ປອ. ຄໍາພາຍ ສີສະຫວັນ, ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະກິລາ (ຕາງໜ້າກຸ່ມທີ່ III)* |
| **14:30 – 15:00** | **ສົນທະນາ ກ່ຽວກັບ ການລົງທຶນໃສ່ ການພັດທະນາສີມືແຮງງານ ເຊິ່ງເປັນປັດໃຈສໍາຄັນໃນການພັດທະນາມະນຸດ** |
| **15:00 – 15:30** | **ພັກຜ່ອນດື່ມຊາ-ກາເຟ** |

| | |
|---|---|
| **15:30 – 15:45** | **ກຸ່ມສົນທະນາ 4 - ລາຍງານຜົນຂອງການປຶກສາຫາລື ກ່ຽວກັບ ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືສາມຫຼ່ຽມ: "ກົນໄກການຈັດຕັ້ງປະຕິບັດ ແລະການຕິດຕາມ ເພື່ອການພັດທະນາທີ່ມີປະສິດທິຜົນ"**<br>*ໂດຍ: ທ່ານ ປອ. ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ (ຕາງໜ້າກຸ່ມທີ່ IV)* |
| **15:45 – 16:15** | **ສົນທະນາ ກ່ຽວກັບ ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະການຮ່ວມມືສາມຫຼ່ຽມ: "ກົນໄກການຈັດຕັ້ງປະຕິບັດ ແລະການຕິດຕາມ ເພື່ອການພັດທະນາທີ່ມີປະສິດທິຜົນ"** |
| **16:15 – 16:20** | **ກ່າວມີຄຳເຫັນຕໍ່ກອງປະຊຸມ**<br>*ໂດຍ: ທ່ານ ນາງ ຄາຣິນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ* |
| **16:20 – 16:25** | **ກ່າວມີຄຳເຫັນຕໍ່ກອງປະຊຸມ**<br>*ໂດຍ: ທ່ານ ປອ. ບຸນທອງ ດີວິໄຊ, ເຈົ້າແຂວງໆຈຳປາສັກ* |
| **16:25 – 16:35** | **ກ່າວສະຫຼຸບ ແລະປິດກອງປະຊຸມໂຕະມົນປະຈຳປີ 2017 ຢ່າງເປັນທາງການ**<br>*ໂດຍ: ທ່ານ ປອ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ* |
| **16:45 – 17:15** | **ພິທີຖະແຫຼງຂ່າວ**<br>*ໂດຍ: ທ່ານ ປອ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ*<br>*ໂດຍ: ທ່ານ ປອ. ບຸນທອງ ດີວິໄຊ, ເຈົ້າແຂວງໆຈຳປາສັກ*<br>*ໂດຍ: ທ່ານ ນາງ ຄາຣິນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ* |